# ບົດປະເມີນຜົນກະທົບ ຂອງຮ່າງກົດໝາຍ
# ວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ (IA NOTE)

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ:

### 1.1 ຂໍ້ມູນຕິດຕໍ່ພົວພັນ:

ຊື່ກະຊວງ/ອົງການ: ກະຊວງກະສິກຳ ແລະ ປ່າໄມ້;

ຊື່ກົມ/ພະແນກ: ກົມພັດທະນາຊົນນະບົດ ແລະ ສະຫະກອນ;

ຊື່ ແລະ ຕຳແໜ່ງຂອງພະນັກງານທີ່ຮັບຜິດຊອບ:

- ທ່ານ ກອງແກ້ວ ວົງປະເສີດ, ຫົວໜ້າຫ້ອງການສັງລວມວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.
- ເບີໂທລະສັບ: 021 264720; 020 22240198.
- ທ່ານ ວໍລະວຸດ ລິນທະວົງ, ຮັກສາການຫົວໜ້າພະແນກພັດທະນາຊົນນະບົດ, ຫ້ອງການສັງລວມວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;
- ເບີໂທລະສັບ: 021 264720; 020 22346999; ອີເມລ: wouth_nrdpe@yahoo.com.

### 1.2 ຊື່ນິຕິກຳ:

ຊື່ຮ່າງນິຕິກຳ: ຮ່າງກົດໝາຍວ່າດ້ວຍການຈັດສັນ ພູມລຳເນົາ ແລະ ອາຊີບ.

ຮ່າງນິຕິກຳແມ່ນສະບັບ: ☑ ໃໝ່ ☐ປັບປຸງ

### 1.3 ກຳນົດເວລາ:

- ແຕ່ງຕັ້ງຄະນະຮັບຜິດຊອບ ສ້າງຮ່າງກົດໝາຍ ເດືອນ ພະຈິກ 2016;
- ສ້າງຮ່າງສຳເລັດ ເດືອນ ເມສາ 2017;
- ສຳເລັດການທາບທາມຄຳເຫັນຢູ່ສູນກາງ ແລະ ທ້ອງຖິ່ນ ເດືອນ ສິງຫາ 2017;
- ສຳເລັດການປັບປຸງ ຕາມຄຳເຫັນຂອງການທາບທາມ ເດືອນ ກັນຍາ 2017;
- ສະເໜີຜ່ານຄະນະນຳ ກະຊວງກະສິກຳ ແລະ ປ່າໄມ້ ເດືອນ ຕຸລາ 2017;
- ສະເໜີຕໍ່ກະຊວງຍຸຕິທຳ ເພື່ອກວດກາຄວາມສອດຄ່ອງ ເດືອນ ພະຈິກ 2017;
- ສະເໜີເຂົ້າພິຈາລະນາ ໃນກອງປະຊຸມລັດຖະບານ ເດືອນ ທັນວາ 2017;
- ສະເໜີເຂົ້າພິຈາລະນາຮັບຮອງ ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII, ເດືອນ ເມສາ 2018.

## 2. ບັນຫາ ແລະ ຈຸດປະສົງ:

### 2.1 ບັນຫາ:

ພັກ ແລະ ລັດຖະບານ ຖືວຽກງານການຈັດສັນ ພູມລຳເນົາ ແລະ ອາຊີບ ເປັນນະໂຍບາຍໃຫຍ່ ແລະ ແມ່ນໜ້າທີ່ສຳຄັນຍຸດທະສາດ ແນໃສ່ສ້າງຄວາມສະເໝີພາບ ແລະ ຄວາມສາມັກຄີປອງດອງບັນດາເຜົ່າ ໃຫ້ນັບມື້ໜັກແໜ້ນ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ. ຊຶ່ງໃນໄລຍະຜ່ານມາ, ພັກ ແລະ ລັດຖະບານ ໄດ້ອອກນິຕິກຳຫຼາຍສະບັບ ເພື່ອຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ເຊັ່ນ: ມະຕິ ກ່ຽວ ກັບວຽກງານພັດທະນາຊົນນະບົດ, ມະຕິ ກ່ຽວກັບວຽກງານຊົນເຜົ່າໃນໄລຍະໃໝ່, ຄຳສັ່ງແນະນຳ ສະບັບເລກທີ 09/ກມສພ ວ່າດ້ວຍການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ຄຳສັ່ງແນະນຳ 03/ກພສພ ວ່າດ້ວຍການສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ມະຕິ 03/ກມສພ ວ່າດ້ວຍສາມສ້າງ, ດຳລັດວ່າດ້ວຍການມອບດິນ-ມອບປ່າ (1994), ຄຳສັ່ງ 04, 07, 36 ວ່າດ້ວຍການ ຈັດສັນພູມລຳເນົາ ແລະ ອາຊີບໝັ້ນຄົງໃຫ້ປະຊາຊົນ, ດຳລັດ 84 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ ແລະ ດຳລັດອື່ນໆ.

ເຖິງວ່າໄດ້ມີແນວທາງ, ນະໂຍບາຍ, ມະຕິຂອງພັກ ແລະ ບັນດານິຕິກຳຕ່າງໆທີ່ກ່າວມາຂ້າງເທິງນີ້ ເປັນບ່ອນ ອີງ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງແລ້ວ, ແຕ່ການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ໄລຍະຜ່ານມາ ຍັງພົບຂໍ້ຫຍຸ້ງຍາກ ແລະ ມີບັນຫາ ຄືດັ່ງນີ້:

1. ທັດສະນະຄວາມຮັບຮູ້, ເຂົ້າໃຈ ແລະ ການໃຫ້ຄວາມສຳຄັນຕໍ່ວຽກງານຈັດສັນ ພູມລຳເນົາ ແລະ ອາຊີບໃຫ້ ປະຊາຊົນບັນດາເຜົ່າ ຂອງບັນດາຂະແໜງການ, ອົງການປົກຄອງແຕ່ລະຂັ້ນ ຍັງຖືເບົາ ແລະ ການຈັດຕັ້ງປະຕິ ບັດວຽກງານຕົວຈິງ ກໍ່ບໍ່ທັນເປັນເອກະພາບກັນ ຍັງເຮັດພໍໃຜພໍລາວ;
2. ການທົດແທນຄ່າເສຍຫາຍຈາກໂຄງການພັດທະນາຕ່າງໆ ຍັງບໍ່ທັນເປັນເອກກະພາບກັນ ເປັນຕົ້ນ: ໂຄງ ການ ຈັດສັນສະເພາະ ທີ່ຂະແໜງການຈັດຕັ້ງປະຕິບັດ ເຊັ່ນ: ການກໍ່ສ້າງເຂື່ອນໄຟຟ້າ, ໂຄງການຂຸດຄົ້ນບໍ່ແຮ່, ໂຄງການພັດທະນາພື້ນຖານໂຄງລ່າງ ແລະ ອື່ນໆ;
3. ການມີສ່ວນຮ່ວມຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຈັດສັນ ເຫັນວ່າຍັງມີນ້ອຍ ແລະ ບໍ່ໄດ້ຮັບ ການເສີມຂະຫຍາຍເທົ່າທີ່ຄວນ;
4. ການເຄື່ອນຍ້າຍໄປຕັ້ງພູມລຳເນົາຂອງປະຊາຊົນ ຍັງມີລັກສະນະຊະຊາຍ;
5. ການດຸ່ນດ່ຽງຈຳນວນປະຊາກອນ ກັບ ພື້ນທີ່ຍັງບໍ່ເໝາະສົມ;
6. ມາດຕະການ, ວິທີການ, ມາດຕະຖານ ໃນການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາຕ່າງໆ ບໍ່ ທັນເປັນເອກກະພາບກັນ ແລະ ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນກໍ່ຍັງບໍ່ທັນໄດ້ຍົກລະດັບໃຫ້ດີຂຶ້ນ ເທົ່າທີ່ຄວນ;
7. ວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເປັນວຽກທີ່ຕິດພັນກັບກັບສິດ, ພັນທະ ແລະ ຜົນປະໂຫຍດໂດຍ ກົງຂອງປະຊາຊົນ ແລະ ໃນໄລຍະຜ່ານມາ, ໄດ້ມີນິຕິກຳຫຼາຍສະບັບ ທີ່ເປັນບ່ອນອີງໃນການຈັດຕັ້ງປະ ຕິບັດ ວຽກງານດັ່ງກ່າວ ແຕ່ກໍ່ຍັງບໍ່ທັນມີກົດໝາຍສະເພາະທີ່ນຳໃຊ້ເປັນບ່ອນອີງຫຼັກ;
8. ວຽກງານຈັດສັນພູມລຳເນົາ ແລະ ອາຊີບໃຫ້ປະຊາຊົນ ໄດ້ກາຍເປັນບັນຫາພື້ນເດັ່ນ ເຄັ່ງຮ້ອນ ແລະ ມີຄວາມ ຈຳເປັນຕ້ອງໄດ້ແກ້ໄຂ ແບບກວມລວມ ແລະ ດ້ວຍມາດຕະການ, ວິທີການ ທີ່ເປັນລະບົບຄົບຊຸດຂອງລັດ ຖະບານ ຊຶ່ງບໍ່ສາມາດຈະມອບໝາຍໃຫ້ທ້ອງຖິ່ນແກ້ໄຂເອງເອົາພໍໃຜພໍລາວ ຫຼືໃຫ້ທ້ອງຖິ່ນນີ້ແກ້ໄຂນຳກັນ ກັບທ້ອງຖິ່ນອື່ນໄດ້.

2.2 ຈຸດປະສົງ:

1. ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ພັດທະນາວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ລວມສູນ ແລະ ເປັນ ເອກກະພາບກັນ ໃນຂອບເຂດທົ່ວປະເທດ;
2. ເພື່ອຮັບປະກັນໃຫ້ປະຊາຊົນບັນດາເຜົ່າ ທີ່ຢູ່ເຂດເປົ້າໝາຍຈັດສັນພູມລຳເນົາ ມີທີ່ຢູ່ອາໃສ, ບ່ອນທຳມາຫາ ກິນ ແລະ ອາຊີບທີ່ໝັ້ນຄົງ ແນໃສ່ແກ້ໄຂການເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງ, ແກ້ໄຂຄວາມທຸກ ຍາກ, ປັບປຸງຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນກວ່າເກົ່າ ແລະ ສ້າງຄວາມເປັນ ລະບຽບຮຽບຮ້ອຍໃນສັງຄົມ;
3. ເພື່ອຮັບປະກັນໃຫ້ບັນລຸຄາດໝາຍ ກ່ຽວກັບການຈັດສັນພູມລຳເນົາໃຫ້ປະຊາຊົນ ກໍ່ຄື ເປົ້າໝາຍແກ້ໄຂ ຄວາມທຸກຍາກ ຕາມມະຕິກອງປະຊຸມໃຫຍ່ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ຂອງສະຫະປະຊາດ ໄດ້ວາງອອກ;
4. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຈັດສັດ ພູມລຳເນົາ ແລະ ອາຊີບໃຫ້ປະຊາຊົນ ໃນທົ່ວປະເທດ ໄດ້ ທັນເຂົ້າສູ່ກົດໝາຍ ທັງເປັນບ່ອນອີງໃຫ້ແກ່ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ;
5. ສ້າງຄວາມເຊື່ອໝັ້ນ ແລະ ຍາດແຍ່ງການຊ່ວຍເຫຼືອລ້າ, ກູ້ຢືມຕ່າງປະເທດ, ອົງການຈັດຕັ້ງສາກົນຕ່າງໆເຂົ້າ ໃນວຽກງານດັ່ງກ່າວ.

## 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ:

3.1 ທາງເລືອກທີ 1: ຮັກສາຕາມສະພາບການໃນປັດຈຸບັນ:

ໄລຍະຜ່ານມາ ເຖິງແມ່ນວ່າບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ໄດ້ມີຄວາມພະຍາຍາມຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ຕາມບັນດານິຕິກໍາຕ່າງໆແລ້ວກໍຕາມ ແຕ່ໃນດ້ານຫຼັກການແລ້ວ ຍັງເຫັນວ່າບໍ່ທັນມີຄວາມເປັນເອກະພາບກັນທາງດ້ານກົນໄກ ໃນການຄຸ້ມຄອງ, ວິທີການ, ມາດຕະການ ແລະ ມາດຕະຖານ ໃນການຈັດຕັ້ງປະຕິບັດຕົວຈິງ, ຍັງຂຶ້ນກັບເງື່ອນໄຂ, ສະພາບຈຸດພິເສດ ແລະ ທ່າແຮງ ຂອງແຕ່ລະທ້ອງຖິ່ນ ເນື່ອງຈາກວ່າບໍ່ທັນມີກົດໝາຍທີ່ເປັນບ່ອນອີງສະເພາະໃນການຈັດຕັ້ງປະຕິບັດ.

ຜົນດີ:

- ບໍ່ສູນເສຍງົບປະມານ ໃນການສ້າງກົດໝາຍວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ;
- ບໍ່ກະທົບເຖິງຂະແໜງການອື່ນ ທີ່ຮັບຜິດຊອບວຽກງານຈັດສັນພູມລໍາເນົາ ແລະ ອາຊີບ;
- ບໍ່ເປັນການເພີ່ມພະລະໃຫ້ແກ່ເຈົ້າຂອງໂຄງການ ແລະ ຜູ້ພັດທະນາໂຄງການ ໃນການປະຕິບັດຕາມເງື່ອນໄຂ ຂອງການຈັດສັນພູມລໍາເນົາ ແລະ ອາຊີບ.

ຜົນເສຍ:

- ການຄຸ້ມຄອງລັດ ຕໍ່ກັບວຽກງານດັ່ງກ່າວ ຍັງຈະສືບຕໍ່ບໍ່ທັນລວມສູນເປັນເອກະພາບ ແລະ ການເຄື່ອນຍ້າຍຂອງປະຊາຊົນ ກໍຍັງສືບຕໍ່ເປັນລັກສະນະແບບຊະຊາຍຄືເກົ່າ;
- ຄວາມແຕກໂຕນກັນ ລະຫວ່າງ ການພັດທະນາຕົວເມືອງ ແລະ ຊົນນະບົດ ຈະບໍ່ໄດ້ຮັບການແກ້ໄຂ;
- ເກີດມີປະກົດການຫຍໍ້ທໍ້ເພີ່ມຂຶ້ນ ເປັນຕົ້ນຄວາມບໍ່ຍຸຕິທໍາໃນການທົດແທນຄ່າເສຍຫາຍຈາກການຈັດສັນ,ບໍ່ສາມາດຈັດສັນປະຊາຊົນທີ່ຢູ່ເຂດຫ່າງໄກຊອກຫຼີກມາຢູ່ເຂດທີ່ມີເງື່ອນໄຂພັດທະນາ,ບໍ່ສາມາດແກ້ໄຂການຕັ້ງພູມລໍາເນົາແບບກະແຈກກະຈາຍຂອງປະຊາຊົນ.

3.2 ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກໍາ

ໄລຍະຜ່ານມາ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ໄດ້ເປັນເຈົ້າການປະສານງານກັບບັນດາຂະແໜງການ, ອົງການປົກຄອງແຕ່ລະຂັ້ນ ເພື່ອດໍາເນີນການຈັດສັນພູມລໍາເນົາ ແລະ ອາຊີບໃຫ້ແກ່ປະຊາຊົນ ໃນທົ່ວປະເທດ ເພື່ອຮັບປະກັນເຮັດໃຫ້ປະຊາຊົນລາວບັນດາເຜົ່າ ໂດຍສະເພາະເຂດຫ່າງໄກຊອກຫລີກ, ທຸລະກັນດານ ທີ່ບໍ່ມີເງື່ອນໄຂໃນການພັດທະນາ ແລະ ເຂດທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕ່າງໆ ຂອງລັດຖະບານ ໄດ້ມີທີ່ຢູ່ອາໃສ, ບ່ອນທໍາມາຫາກິນ ແລະ ມີອາຊີບທີ່ໝັ້ນຄົງ ແລະ ມີຄຸນນະພາບຊີວິດການເປັນຢູ່ທີ່ດີ. ແຕ່ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ເຫັນວ່າ ຍັງບໍ່ສອດຄ່ອງກັບມາດຕາ 10 ຂອງລັດຖະທໍາມະນູນ ແຫ່ງ ສປປ ລາວ ທີ່ລະ ບຸວ່າ: "ລັດ ປົກຄອງ ແລະ ຄຸ້ມຄອງສັງຄົມ ດ້ວຍລັດຖະທໍາມະນູນ ແລະ ກົດໝາຍ. ອົງການຈັດ ຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ" ແລະ ບໍ່ສອດຄ່ອງກັບນະໂຍບາຍຂອງ ລັດທີ່ລະບຸໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍການສ້າງນິຕິກໍາວ່າ: "ລັດ ສົ່ງເສີມໃຫ້ມີການສ້າງນິຕິກໍາເປັນລະບົບຄົບຊຸດໃນທຸກຂົງເຂດ ເພື່ອຄຸ້ມ ຄອງລັດ, ຄຸ້ມຄອງສັງຄົມ...". ສະນັ້ນ, ຖ້າບໍ່ມີນິຕິກໍາສະເພາະ ກໍຈະເຮັດໃຫ້ເກີດຄວາມບໍ່ເອກະພາບພາບ ໃນອົງການລັດ, ຜູ້ໄດ້ຮັບຜົນກະທົບຈາກໂຄງການ ມີຄວາມອັບປະໂຫຍດ ແລະ ສັງຄົມບໍ່ມີຄວາມຍຸຕິທໍາ ແລະ ບໍ່ມີຄວາມສະຫງົບ.

ຜົນດີ:

- ບໍ່ສູນເສຍງົບປະມານ ໃນການສ້າງຮ່າງກົດໝາຍວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ;
- ບໍ່ກະທົບເຖິງຂະແໜງການອື່ນ ທີ່ຮັບຜິດຊອບວຽກງານຈັດສັນພູມລໍາເນົາ ແລະ ອາຊີບ;

ຜົນເສຍ:

- ຖ້າຫາກການຈັດສັນ ພູມລໍາເນົາ ແລະ ອາຊີບໃຫ້ແກ່ປະຊາຊົນ ດໍາເນີນໄປຕາມຮູບແບບ ແລະ ວິທີການທີ່ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ກໍຈະບໍ່ສາມາດເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ;

- ການຈັດຕັ້ງປະຕິບັດວຽກງານຈັດສັນພູມລຳເນົາ ແລະ ອາຊີບ ຍັງສືບຕໍ່ບໍ່ມີຄວາມເປັນເອກະພາບກັນ ເປັນຕົ້ນ: ການກຳນົດມາດຕະຖານຂອງການທົດແທນຄ່າເສຍຫາຍ ຫຼື ຫົວໜ່ວຍລາຄາ, ກົນໄກການຄຸ້ມຄອງ ແລະ ອົງການທີ່ຮັບຜິດຊອບໃນວຽກນີ້.

**3.3 ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກຳ:**

ການສ້າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ນີ້ ກໍເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ຊຶ່ງໄດ້ກຳນົດຄວາມຮັບຜິດຊອບ ລະຫວ່າງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ໄດ້ແບ່ງການຈັດສັນພູມລຳເນົາອອກເປັນ 02 ປະເພດ ຄື: ການຈັດສັນທົ່ວໄປ ແລະ ການຈັດສັນສະເພາະ; ໄດ້ກຳນົດຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ ແຕ່ສູນກາງລົງຮອດທ້ອງຖິ່ນ ຊຶ່ງມີພາລະບົດບາດ ໃນການໂຄສະນາ, ຂົນຂວາຍ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ, ຜູ້ໄດ້ຮັບຜົນກະທົບໄດ້ເຂົ້າໃຈເຖິງເຫດຜົນຄວາມຈຳເປັນ, ທິດທາງແຜນການ ແລະ ເຂົ້າຮ່ວມໃນວຽກງານຈັດສັນພູມລຳເນົາ ແລະ ອາຊີບ.

ຜົນດີ:

- ເປັນເຄື່ອງມືດ້ານນິຕິກຳ ໃນການຈັດຕັ້ງປະຕິບັດວຽກງານການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ ລວມສູນ ແລະ ມີຄວາມເປັນເອກກະພາບ ໃນຂອບເຂດທົ່ວປະເທດ;
- ສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກການຈັດສັນ ພູມລຳເນົາ ແລະ ອາຊີບ;
- ແກ້ໄຂບັນຫາການເຄື່ອນຍ້າຍ ແລະ ຕັ້ງພູມລຳເນົາ ແບບຊະຊາຍ;
- ປະຊາຊົນບັນດາເຜົ່າທີ່ຢູ່ເຂດເປົ້າໝາຍຈັດສັນພູມລຳເນົາ ມີທີ່ຢູ່ອາໄສ, ບ່ອນທຳມາຫາກິນ ແລະ ອາຊີບທີ່ໝັ້ນຄົງ;
- ປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ ແລະ ປັບປຸງຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນ;
- ເພື່ອບັນລຸເປົ້າໝາຍໃນການພັດທະນາແບບຍືນຍົງ ຂອງສະຫະປະຊາດໄດ້ວາງອອກ.

ຜົນເສຍ:

- ສູນເສຍງົບປະມານຂອງລັດ ແລະ ການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ທີ່ປະກອບເຂົ້າໃນການສ້າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ;
- ກະທົບເຖິງຂະແໜງການອື່ນ ທີ່ຮັບຜິດຊອບວຽກງານຈັດສັນພູມລຳເນົາ ແລະ ອາຊີບ ເປັນຕົ້ນ ໂຄງການກໍ່ສ້າງເຂື່ອນໄຟຟ້າ, ໂຄງການຂຸດຄົ້ນບໍ່ແຮ່ ແລະ ໂຄງການກໍ່ສ້າງພື້ນຖານໂຄງລ່າງ ຊຶ່ງໄລຍະຜ່ານມາແມ່ນຂະແໜງການກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດເອງ.

**3.4 ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກຳ:**

**3.4.1 ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ:**

ເນື່ອງຈາກວ່າ: ໃນໄລຍະຜ່ານມາ ການຈັດຕັ້ງປະຕິບັດວຽກງານການຈັດສັນພູມລຳເນົາ ແລະ ອາຊີບ ຍັງບໍ່ທັນມີນິຕິກຳສະເພາະ, ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຍັງໄດ້ນຳໃຊ້ຫຼາຍ ມະຕິ, ຄຳສັ່ງ ຂອງພັກ ແລະ ບັນດານິຕິກຳຂອງລັດ ເຮັດໃຫ້ການຈັດຕັ້ງປະຕິບັດພົບຄວາມຫຍຸ້ງຍາກ ແລະ ບໍ່ເປັນເອກະພາບກັນ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ສ້າງກົດໝາຍ ວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ຂຶ້ນມາ ໂດຍການຫັນເອົາແນວທາງນະໂຍ ບາຍ ທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຂອງພັກແຕ່ລະຄັ້ງ ແລະ ລວບລວມເອົາບັນດານິຕິກຳລຸ່ມກົດໝາຍ ມາເປັນກົດໝາຍສະບັບດຽວ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດ ແລະ ອີກດ້ານໜຶ່ງ ວຽກງານດັ່ງກ່າວນີ້ ກໍຕິດພັນໂດຍກົງກັບສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ.

ຜ່ານການທາບທາມ ຄຳເຫັນຈາກພາກລັດ, ທຸລະກິດ ແລະ ສັງຄົມ ນັ້ນ ແມ່ນເຫັນດີ ແລະ ສະໜັບສະໜູນ ຕໍ່ກັບການສ້າງກົດໝາຍສະບັບນີ້.

ນິຕິກຳທີ່ຈະສ້າງ ຫຼື ປັບປຸງ ນອນຢູ່ໃນປະເພດນິຕິກຳທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກຳບໍ່?

☑ ແມ່ນ ☐ ບໍ່ແມ່ນ

3.4.2 ການປັບປຸງຮ່າງນິຕິກຳ:

3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ:

ນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ຈະຈຳກັດການແຂ່ງຂັນທາງທຸລະກິດໃນ ສປປ ລາວ ຫຼື ບໍ່?

☐ ຈຳກັດ ☑ ບໍ່ຈຳກັດ

3.4.4 ພັນທະຕໍ່ສາກົນ:

ຮ່າງນິຕິກຳ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼືບໍ່? ☐ ແມ່ນ ☑ ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☐ WTO ☐ AEC ☐ FTA ☐ ອື່ນໆ (ກຳນົດແຈ້ງ)

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງຫຼືປັບປຸງມີຄວາມສອດຄ່ອງກັບພັນທະສາກົນນັ້ນຫຼືບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

3.4.5 ນິຕິກຳ ທີ່ພົວພັນ:

1. ຄຳສັ່ງແນະນຳຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ສະບັບເລກທີ 09/ກມສພ, ລົງວັນທີ 08 ມິຖຸນາ 2004;
2. ຄຳສັ່ງແນະນຳຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງບ້ານເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ສະບັບເລກທີ 03/ກມສພ, ລົງວັນທີ 30 ພຶດສະພາ 2011;
3. ມະຕິ ຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012;
4. ດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະ ນາ ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016;
5. ຄຳສັ່ງແນະນຳ ວ່າດ້ວຍການສ້າງແຜນງານລົບລ້າງຄວາມທຸກຍາກ ສະບັບເລກທີ 10/ນຍ, ລົງວັນທີ 25 ມິຖຸນາ 2001;
6. ຄຳສັ່ງວ່າດ້ວຍການຈັດສັນອາຊີບ ແລະ ພູມລຳເນົາຄົງທີ່ໃຫ້ປະຊາຊົນ ສະບັບເລກທີ 04/ນຍ, ລົງວັນທີ 12 ເມສາ 2002;
7. ຄຳສັ່ງ ແນະນຳວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ ໃນການຈັດສັນອາຊີບ ແລະ ພູມລຳເນົາຄົງທີ່ ໃຫ້ແກ່ປະຊາຊົນທີ່ດຳລົງຊີວິດແບບເລື່ອນລອຍ ຕາມເຂດພູດອຍຫ່າງໄກສອກຫຼີກ ສະບັບເລກທີ 07/ນຍ, ລົງວັນທີ 9 ເມສາ 2004;
8. ຄຳສັ່ງແນະນຳ ເພີ່ມເຕີມກ່ຽວກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ສະບັບເລກທີ 13/ນຍ, ລົງວັນທີ 9 ມິຖຸນາ 2008;
9. ຄຳສັ່ງ ວ່າດ້ວຍການແກ້ໄຂບັນຫາການເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງ ຕິດພັນກັບການຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນບັນດາເຜົ່າ ສະບັບເລກທີ 36/ນຍ, ລົງວັນທີ 17 ສິງຫາ 2009.

ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼືບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

## 4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ:

4.1 ສັງຄົມ

4.1.1 ຜົນກະທົບ:

ກຸ່ມຄົນທີ່ຈະໄດ້ຮັບຜົນກະທົບຈາກຮ່າງກົດໝາຍ ສະບັບນີ້ ແມ່ນກຸ່ມຄົນທີ່ຢູ່ໃນເຂດເປົ້າໝາຍການຈັດສັນພູມລຳເນົາ ແລະ ອາຊີບ ຄື:

1. ເຂດທຸລະກັນດານ ແລະ ຂາດເງື່ອນໄຂການພັດທະນາ;
2. ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ;
3. ເຂດທີ່ມີລັກສະນະພິເສດ;
4. ເຂດທີ່ຖືກໂຄງການພັດທະນາ.

**ຜົນກະທົບທາງບວກ:**

- ປະຊາຊົນບັນດາເຜົ່າທີ່ຢູ່ເຂດເປົ້າໝາຍຈັດສັນພູມລຳເນົາ ມີທີ່ຢູ່ອາໄສ, ບ່ອນທຳມາຫາກິນ ແລະ ອາຊີບທີ່ໝັ້ນຄົງ;
- ແກ້ໄຂບັນຫາການເຄື່ອນຍ້າຍ ແລະ ຕັ້ງພູມລຳເນົາ ແບບຊະຊາຍ;
- ສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກການຈັດສັນພູມລຳເນົາ ແລະ ອາຊີບ;
- ເປັນບ່ອນອີງ ໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ໃນການຮຽກຮ້ອງເອົາສິດ ແລະ ຜົນປະໂຫຍດ ອັນຊອບທຳ ຕາມກົດໝາຍ.

**ຜົນກະທົບທາງລົບ:**

- ແຕະຕ້ອງເຖິງແບບແຜນ, ວິຖີການດຳລົງຊີວິດ ແລະ ຮີດຄອງປະເພນີ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກການຈັດສັນພູມລຳເນົາ ແລະ ອາຊີບ.

**4.1.2 ເງື່ອນໄຂໃນການປະຕິບັດນິຕິກຳ:**

ປະຊາຊົນທີ່ຢູ່ໃນເຂດເປົ້າໝາຍການຈັດສັນພູມລຳເນົາ ແລະ ອາຊີບ ຈະຕ້ອງໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນກ່ຽວກັບອາຊີບ ແລະ ຊັບສິນ ທີ່ຖືກຕ້ອງ, ຊັດເຈັນ ແລະ ຄົບຖ້ວນ ໃຫ້ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວ ຂ້ອງໃນການຈັດຕັ້ງປະຕິບັດວຽກງານຈັດສັນພູມລຳເນົາ ແລະ ອາຊີບ.

**ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດນິຕິກຳ:**

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ

ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

**4.1.3 ການທາບທາມຄຳເຫັນ:**

ການສ້າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ໃນຄັ້ງນີ້ ຄະນະຮັບຜິດຊອບໄດ້ທາບທາມຄຳເຫັນຢ່າງກວ້າງຂວາງຈາກ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດ ຊຶ່ງເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນບັນດາເຜົ່າ. ໃນການທາບທາມຄຳເຫັນ ເຫັນວ່າ ຜູ້ແທນໄດ້ມີຄວາມເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບສູງປະກອບຄຳເຫັນ ຕໍ່ເນື້ອໃນຮ່າງກົດໝາຍ ແລະ ສະໜັບສະໜູນໃຫ້ກົດໝາຍດັ່ງກ່າວ ຊຶ່ງຈະນຳເອົາຜົນປະໂຫຍດສູງສຸດມາໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ໂດຍໄດ້ປຽບທຽບຈາກການປະຕິບັດໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ໃນໄລຍະຜ່ານມາ.

**4.1.4 ສະຫຼຸບ:**

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☐ | ☑ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດຳລົງຊີວິດຂອງບຸກຄົນ) | ☐ | ☑ | ☐ |

| | | | |
|---|---|---|---|
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼືປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

### 4.2 ພາກທຸລະກິດ:

#### 4.2.1 ຜົນກະທົບ:

ການສ້າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ຈະສົ່ງຜົນກະທົບຕໍ່ການລົງທຶນຂອງຜູ້ປະກອບການ ກ່ຽວກັບ ໂຄງການກໍ່ສ້າງເຂື່ອນໄຟຟ້າ, ບໍ່ແຮ່ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນ ທີ່ມີການຍົກຍ້າຍປະຊາ ຊົນອອກຈາກພື້ນທີ່ເດີມ.

**ຜົນກະທົບທາງບວກ:**

ຜູ້ປະກອບການ ກ່ຽວກັບ ໂຄງການກໍ່ສ້າງເຂື່ອນໄຟຟ້າ, ບໍ່ແຮ່ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນ ມີບ່ອນອີງດ້ານກົດໝາຍ ຊຶ່ງຈະສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ.

**ຜົນກະທົບທາງລົບ:**

ຜູ້ປະກອບການ ກ່ຽວກັບ ໂຄງການກໍ່ສ້າງເຂື່ອນໄຟຟ້າ, ບໍ່ແຮ່ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນ ຈະເປັນຜູ້ຮັບຜິດຊອບໂດຍກົງຕໍ່ການທົດແທນຄ່າເສຍຫາຍ ໃນການຈັດສັນພູມລຳເນົາ ແລະ ອາຊີບຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບ ຈາກການລົງທຶນຂອງຕົນ.

#### 4.2.2 ເງື່ອນໄຂໃນການປະຕິບັດນິຕິກຳ:

ຮ່າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ຮຽກຮ້ອງໃຫ້ຜູ້ປະກອບການ ຕ້ອງຮັບຜິດຊອບໂດຍກົງໃນການທົດແທນຄ່າເສຍຫາຍ, ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ແລະ ຄ່າໃຊ້ຈ່າຍອື່ນໆ ຕາມແຜນການ ຈັດສັນພູມລຳເນົາ ແລະ ອາຊີບ ຂອງການລົງທຶນຂອງຕົນ ທີ່ໄດ້ຜ່ານການຮັບຮອງຈາກຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ (ຕົວແທນພາກລັດ).

**ຄາດຄະເນຄ່າສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດນິຕິກຳ:**

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ

ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

#### 4.2.3 ການທາບທາມຄຳເຫັນ:

ການສ້າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ໃນຄັ້ງນີ້ ຄະນະຮັບຜິດຊອບໄດ້ທາບທາມຄຳເຫັນຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຊຶ່ງເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງພາກທຸລະກິດ ແລະ ຍັງໄດ້ທາບທາມບັນດານັກທຸລະກິດຈຳນວນໜຶ່ງ. ໃນການທາບທາມຄຳເຫັນ ເຫັນວ່າ ໄດ້ຮັບຄຳເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດໃຫ້ແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄວ້າປັບປຸງເນື້ອໃນ ຂອງຮ່າງກົດໝາຍວ່າການຈັດສັນພູມລຳເນົາ ແລະ ອາຊີບ.

#### 4.2.4 ສະຫຼຸບ:

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂະແໜງອຸດສາຫະກຳທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກຳສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວ ທີ່ຖືກຜົນກະທົບ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ)* | ☑ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ)* | ☐ | ☑ | ☐ |

| | | | |
|---|---|---|---|
| ການບໍ່ເຫັນດີ ຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ *(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບ ຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

4.3 ລັດຖະບານ:

4.3.1 ຜົນກະທົບ:

ບັນດາກະຊວງ, ອົງການລັດທຽບເທົ່າຂັ້ນສູນກາງ ທີ່ໄດ້ຮັບຜົນກະທົບ ຈາກຮ່າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ແມ່ນບັນດາກະຊວງ, ອົງການທີ່ມີໂຄງການພັດທະນາຂົ້ນກັບ ເປັນຕົ້ນ ໂຄງການກໍ່ສ້າງເຂື່ອນໄຟຟ້າ, ບໍ່ແຮ່ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນ ແລະ ກະຊວງກະສິກຳ ແລະ ປ່າໄມ້ ໃນຖານະເປັນຜູ້ຮັບຜິດຊອບໂດຍກົງ ໃນການຈັດສັນທົ່ວໄປ ເປັນຕົ້ນ ການຈັດສັນປະຊາຊົນທີ່ຢູ່ໃນເຂດທຸລະກັນດານ ແລະ ຂາດເງື່ອນໄຂການພັດທະນາ, ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ ແລະ ເຂດທີ່ມີລັກສະນະພິເສດ.

ສຳລັບອົງການປົກຄອງທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບຈາກຮ່າງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ແມ່ນບັນດາອົງການສາຍຕັ້ງ ທີ່ຂຶ້ນກັບກະຊວງ, ອົງການ ທີ່ໄດ້ກຳນົດໃນວັກທີໜຶ່ງຂອງຂໍ້ນີ້.

ຜົນກະທົບທາງບວກ:

- ມີອົງການຈັດຕັ້ງທີ່ຮັບຜິດຊອບວຽກງານຈັດສັນພູມລຳເນົາ ແລະ ອາຊີບ ຢ່າງລວມສູນ (ຂະແໜງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໂດຍກົງ);
- ມີການແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ລະຫວ່າງ ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນວຽກງານການຈັດສັນພູມລຳເນົາ ແລະ ອາຊີບ;
- ເປັນບ່ອນອີງອັນໜັກແໜ້ນ ໃຫ້ແກ່ອົງການຈັດຕັ້ງ ທັງສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ແກ່ປະຊາຊົນ;
- ຫັນເອົາວຽກງານຈັດສັນພູມລຳເນົາ ແລະ ອາຊີບ ເຂົ້າສູ່ກົດໝາຍ ທັງເປັນການປະກອບສ່ວນໃນການສ້າງລັດທີ່ຄຸ້ມຄອງ ແລະ ປົກຄອງດ້ວຍກົດໝາຍ ເທື່ອລະກ້າວ.

ຜົນກະທົບທາງລົບ:

- ຄ່າໃຊ້ຈ່າຍຕ່າງໆ ໃນການຈັດຕັ້ງປະຕິບັດກົດໝາຍ ເຊັ່ນ ການຝຶກອົບຮົມ, ການເຄື່ອນໄຫວວຽກງານຂອງພະນັກງານ,ການສ້າງປຶ້ມຄູ່ມື,ແຜ່ນພັບ,ສື່ສິ່ງພິມ,ການໂຄສະນາເຜີຍແຜ່ໃຫ້ປະຊາຊົນ ແລະ ສັງຄົມ;
- ງົບປະມານ ທີ່ໃຊ້ຈ່າຍເຂົ້າໃນວຽກງານຈັດສັນທົ່ວໄປ ຊຶ່ງແມ່ນລັດເປັນຜູ້ຮັບຜິດຊອບໂດຍກົງ.

4.3.2 ເງື່ອນໄຂໃນການຈັດຕັ້ງປະຕິບັດນິຕິກຳ:

ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ສະບັບນີ້ ກຳນົດໃຫ້ລັດມີຄວາມຮັບຜິດຊອບໃນການສະໜອງງົບປະມານ, ບຸກຄະລະກອນ ເຂົ້າໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເຊັ່ນ ການຝຶກອົບຮົມ, ການສ້າງຄູ່ມື, ແຜ່ນພັບ, ສື່ສິ່ງພິມ, ການໂຄສະນາເຜີຍແຜ່ໃຫ້ແກ່ການຈັດຕັ້ງ, ປະຊາຊົນ ແລະ ສັງຄົມ.

4.3.3 ການທາບທາມຄຳເຫັນ:

ບັນດາກະຊວງ, ອົງການລັດຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຖືກທາບທາມຄຳເຫັນ ປະກອບມີ:

- ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໃນຂອບເຂດທົ່ວປະເທດ;
- ຂະແໜງການກະສິກຳ ແລະ ປ່າໄມ້;
- ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ຂະແໜງການພາຍໃນ;
- ຂະແໜງການພະລັງງານ ແລະ ບໍ່ແຮ່;
- ຂະແໜງການໂຍທາທິການ ແລະ ຂົນສົ່ງ;
- ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ;
- ຂະແໜງການແຜນການ ແລະ ການລົງທຶນ;
- ຂະແໜງການການເງິນ;

- ຂະແໜງການສຶກສາທິການ ແລະ ກິລາ;
- ຂະແໜງການສາທາລະນະສຸກ;
- ຂະແໜງການປ້ອງກັນຄວາມສະຫງົບ;
- ຂະແໜງການປ້ອງກັນປະເທດ;
- ຂະແໜງການອຸດສາຫະກຳ ແລະ ການຄ້າ;
- ຂະແໜງການຂະແໜງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
- ຄະນະໂຄສະນາອົບຮົມຂອງພັກ;
- ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
- ບັນດາເມືອງ ທີ່ກຳລັງດຳເນີນໂຄງການຈັດສັນພູມລຳເນົາ ແລະ ອາຊີບ.

ໃນການທາບທາມຄຳເຫັນ ເຫັນວ່າ ບັນດາການຈັດຕັ້ງໄດ້ມີຄວາມເອົາໃຈໃສ່, ມີຄວາມຮັບຜິດຊອບສູງ ປະກອບຄຳເຫັນຕໍ່ກັບເນື້ອໃນຮ່າງກົດໝາຍ ແລະ ສະໜັບສະໜູນເປັນຢ່າງສູງ ໃຫ້ສ້າງກົດໝາຍດັ່ງກ່າວ.

4.3.4 ສະຫຼຸບ:

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ)* | ☐ | ☑ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການ ຢູ່ຂັ້ນແຂວງ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ)* | ☐ | ☑ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ)* | ☐ | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ*(ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

## 5. ການຈັດຕັ້ງປະຕິບັດ:

### 5.1 ການສະໜັບສະໜູນ ແກ່ບຸກຄົນ:

ຄ່າໃຊ້ຈ່າຍຕ່າງໆ ໃນການສ້າງເຄື່ອງມື, ສິ່ງອຳນວຍຄວາມສະດວກ ເພື່ອກະຕຸກຊຸກຍູ້ ໃຫ້ບຸກຄົນໄດ້ຮັບຮູ້ ແລະ ເຂົ້າໃຈ ເຊັ່ນ ການຝຶກອົບຮົມ, ການສ້າງປຶ້ມຄູ່ມື, ແຜ່ນພັບ, ສື່ສິ່ງພິມ, ການໂຄສະນາເຜີຍແຜ່ໃຫ້ປະຊາຊົນ ແລະ ສັງຄົມ ເພື່ອໃຫ້ການຈັດຕັ້ງປະຕິບັດກົດໝາຍ ໄດ້ຮັບປະສິດທິຜົນ.

### 5.2 ການສະໜັບສະໜູນແກ່ພາກທຸລະກິດ:

ຄ່າໃຊ້ຈ່າຍຕ່າງໆ ໃນການສ້າງເຄື່ອງມື, ສິ່ງອຳນວຍຄວາມສະດວກ ເພື່ອກະຕຸກຊຸກຍູ້ ໃຫ້ຜູ້ປະກອບການໄດ້ຮັບຮູ້ ແລະ ເຂົ້າໃຈ ເຊັ່ນ ການຝຶກອົບຮົມ, ການສ້າງປຶ້ມຄູ່ມື, ແຜ່ນພັບ, ສື່ສິ່ງພິມ, ການໂຄສະນາເຜີຍແຜ່ໃຫ້ພາກວິສະ ຫະກິດ ເພື່ອໃຫ້ການຈັດຕັ້ງປະຕິບັດກົດໝາຍ ໄດ້ຮັບປະສິດທິຜົນ.

### 5.3 ແຜນການຈັດຕັ້ງປະຕິບັດ:

ພາຍຫຼັງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ຖືກຮັບຮອງ ແລະ ມີຜົນສັກສິດແລ້ວ, ພາກສ່ວນທີ່ມີໜ້າທີ່ໃນການຈັດຕັ້ງປະຕິບັດ ເຊັ່ນ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງໄດ້ເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍສະບັບນີ້ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ເປັນເອກະພາບກັນ ລະຫວ່າງ ອົງການທີ່ມີໜ້າທີ່ຮັບຜິດຊອບວຽກງານຈັດສັນພູມລຳເນົາ ແລະ ອາຊີບ. ພ້ອມກັນນັ້ນ, ກໍຕ້ອງ

ໂຄສະນາເຜີຍແຜ່ ໃຫ້ພົນລະເມືອງໄດ້ຮັບຮູ້ ແລະ ເຂົ້າໃຈ ເພື່ອເປັນການປຸກລະດົມໃຫ້ພົນລະເມືອງ ມີສະຕິເຄົາ ລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

5.4 ງົບປະມານ ແລະ ແຫຼ່ງທຶນ:

ງົບປະມານທີ່ນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ໄດ້ມາຈາກ:

- ງົບປະມານລັດ;
- ງົບປະມານຜູ້ພັດທະນາໂຄງການ;
- ງົບປະມານການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

5.5 ທົບທວນຄືນ:

ພາຍຫຼັງທີ່ກົດໝາຍວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ ສະບັບນີ້ມີຜົນສັກສິດແລ້ວ ໃນທຸກໆປີ ຂະ ແ ໜງກະສິກໍາ ແລະ ປ່າໄມ້ ຕ້ອງເປັນໃຈກາງສົມທົບບັນດາຂະແໜງການກ່ຽວຂ້ອງ ທົບທວນຄືນຜົນການຈັດຕັ້ງປະ ຕິ ບັດກົດໝາຍສະບັບນີ້ ເພື່ອເປັນຂໍ້ມູນໃນການປັບປຸງກົດໝາຍ ຫຼື ແກ້ໄຂວຽກງານການຈັດສັນພູມລໍາເນົາ ແລະອາ ຊີບ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງປະເທດຊາດ ໃນແຕ່ລະໄລຍະ.

## ການອະນຸມັດ:

1. ☐ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກໍາ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບ ກວດກາ ເພື່ອກວດກາຄືນ ແລະ ໃຫ້ຄໍາແນະນໍາ ຫຼື
2. ☑ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກໍາ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ມີຄໍາເຫັນຕໍ່ບົດປະເມີນຜົນ.

ນະຄອນຫຼວງວຽງຈັນ, ວັນທີ: 08/11/2017

ຫົວໜ້າຄະນະຮັບຜິດຊອບສ້າງຮ່າງກົດໝາຍ
ວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ

ຄໍາບຸນນັດ ໄຊຍະນິນ